ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 0796 /ທຄຕລ 2025
ນະຄອນຫຼວງວຽງຈັນ, ວັນທີ: 14 MAR 2025

# ໜັງສືແຈ້ງເຊີນປະມູນ

**ເຖິງ:** ບັນດາບໍລິສັດ, ວິສາຫະກິດ ຈັດຈຳໜ່າຍ, ຕິດຕັ້ງ ແລະ ສ້ອມແປງແອເຢັນ.

**ເລື່ອງ:** ແຈ້ງເຊີນປະມູນຮັບເໝົາບຳລຸງຮັກສາແອເຢັນຂອງ ທຄຕລ ສຳນັກງານໃຫຍ່

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາທ່ານ ເຂົ້າຮ່ວມ ຍື່ນຊອງປະມູນລາຄາບຳລຸງຮັກສາແອເຢັນຂອງ ທຄຕລ ສຳນັກງານໃຫຍ່ ຈຳນວນ 176 ໜ່ວຍ ດັ່ງລາຍລະອຽດ ລຸ່ມນີ້:

1. **ລາຍລະອຽດໜ້າວຽກ:**
   - ລ້າງອະນາໄມທຳຄວາມສະອາດ Filter ແລະ ໜ້າກາກ;
   - ຖອດມໍເຕີ້ລົງລ້າງທຳຄວາມສະອາດ;
   - ລ້າງທຳຄວາມສະອາດຝົນຄອຍ;
   - ດູດ ແລະ ເປົ່າທຳຄວາມສະອາດທໍ່ນ້ຳເສຍ (ໂດຍໃຊ້ Blower);
   - ກວດເຊັກຈຸດຕໍ່ສາຍໄຟໃນລະບົບ ແລະ ຍຶດດນ໋ອດສາຍໄຟໃຫ້ແໜ້ນໜາ;
   - ກວດເຊັກຮອບມໍເຕີຂອງພັດລົມ ແລະ ແຮງດັນລົມ;
   - ກວດເຊັກສະປີດ, ເທີໂມລູມ ແລະ ອຸນຫະພູມ;
   - ລ້າງທຳຄວາມສະອາດແຜ່ນຄອຍຄອນແດນຊີງ, ຄອຍປ້ຳນ້ຳແຮງດັນສູງ;
   - ກວດເຊັກການເຮັດວຽກຂອງມໍເຕີລະບາຍຄວາມຮ້ອນ;
   - ກວດເຊັກລະບົບຄວາມດັນຂອງລະບົບນ້ຳຢາ ແລະ ກຳລັງອັດຂອງຄອມເພສເຊີ;
   - ກວດກາຄວາມຄົງທີ່ຂອງກະແສໄຟຟ້າ;
   - ກວດກາລະດັບສຽງພ້ອມທັງປັບແຕ່ງ;
   - ກວດກາການເຮັດວຽກຂອງສະວິດຕ່າງໆເຊັ່ນ: ສະວິດ Auto, Manual ແລະ ສະວິດພິເສດ (ຊຸດຄຸມ);
   - ກວດກາລະບົບ, ລ້າງທໍ່ແອ ແລະ ເຮັດຄວາມສະອາດຖາດຮອງນ້ຳ ເພື່ອໃຫ້ນ້ຳແອໄຫຼສະດວກ;
   - ເຮັດຄວາມສະອາດຄອຍເຢັນ ແລະ ຄອຍຮ້ອນ;
   - ເຕີມນ້ຳຢາແອ ແລະ ນ້ຳມັນຄອມເພສເຊີ ກໍລະນີຈຳເປັນ;
   - ເຕີມນ້ຳມັນຫຼໍ່ລື່ນມໍເຕີ ແລະ ລູກປືນພັດລົມ ກໍລະນີຈຳເປັນ;
   - ກວດກາລະບົບເຮັດຄວາມເຢັນທັງໝົດລວມທັງການກວດກາຄອມເພສເຊີສະປີງຄອມເພສເຊີ ແລະ ລະບົບນ້ຳຢາທັງຫຼາຍ;
   - ກວດກາລະບົບໄຟຟ້າທັງໝົດເຊັ່ນ: ຊຸດຄອນໂທນ, ຂົ້ວໄຟຟ້າຂອງອຸປະກອນຕ່າງໆພາຍໃນເຄື່ອງ;
   - ລ້າງເຮັດຄວາມສະອາດພັດລົມລະບາຍຄວາມເຢັນ ແລະ ພັດລົມລະບາຍຄວາມຮ້ອນ ແລະ ອື່ນໆຕາມຄວາມເໝາະສົມ;
   - ບຳລຸງຮັກສາ 4 ຄັ້ງ/ປີ ຫຼື 3 ເດືອນ/ຄັ້ງ ເປັນໄລຍະເວລາ 2 ປີ.

2. **ລາຍລະອຽດການປະກອບເອກະສານ:**

➢ **ເອກະສານ ຊອງທີ 1 (ບໍ່ປິດຊອງ):**

- ປະກອບເອກະສານໃນນາມນິຕິບຸກຄົນທີ່ດຳເນີນທຸລະກິດໃຫ້ບໍລິການຈັດຈຳໜ່າຍ ແລະ ບຳລຸງຮັກສາເຄື່ອງແອເຢັນ, ມີປະສົບການຢ່າງໜ້ອຍ 4 ປີຂຶ້ນໄປ (ສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ, ໃບຢັ້ງຢືນການເສຍອາກອນ ປະຈຳປີ 2024) ພ້ອມໃບຢັ້ງຢືນຜົນງານ ແລະ ປະສົບການທີ່ຜ່ານມາ;
- ກຳນົດຍື່ນ ຊອງທີ 1 ລະຫວ່າງວັນທີ **17/03/2025-25/04/2025** ເວລາ **8:30 – 15:30 ໂມງ** ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ທີ່ປ່ອງຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.

➢ **ເອກະສານ ຊອງທີ 2 (ປິດຊອງ):**

- ໃບສະເໜີລາຄາ 1 ຊຸດ ເຊິ່ງລາຄາແມ່ນໃຫ້ ລະບຸລາຄາສະເລ່ຍຕໍ່ໜ່ວຍ/ຄັ້ງ ໂດຍບໍ່ແຍກຍີ່ຫໍ້ ແລະ ຄວາມແຮງຂອງແອ, ການສະເໜີລາຄາຕ້ອງເປັນສະກຸນເງິນກີບ ແລະ ລວມອາກອນ ມູນຄ່າເພີ່ມ 10% ເຊິ່ງລາຄາດັ່ງກ່າວແມ່ນສະເພາະແຕ່ຄ່າແຮງງານ ໂດຍບໍ່ລວມຄ່າອາໄຫຼ່ ໃນການສ້ອມແປງ ຫຼື ປ່ຽນຖ່າຍ;
- ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດຕາມສັນຍາ (ມູນຄ່າທັງໝົດ = ລາຄາຕໍ່ໜ່ວຍ x ຈຳນວນແອ x 2 ປີ) ໂດຍໜັງສືຄ້ຳ ປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 17/06/2025) ຫຼື ແຊັກທີ່ວີຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນ ດັ່ງກ່າວຄືນ;
- ໃນວັນທີ **30/04/2025** ເວລາ **09:00 ໂມງ** ແມ່ນມື້ເປີດຊອງລາຄາປະມູນ, ໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍ ຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C.

**ໝາຍເຫດ: ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ເປັນເວລາ 2 ປີ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ຮັບເໝົາ;
- ການຊຳລະຄ່າບໍລິການແມ່ນຊຳລະຕາມຈຳນວນແອຕົວຈິງທີ່ບຳລຸງຮັກສາໃນຊຸດນັ້ນ, ຈຳນວນແອອາດມີການເພີ່ມຂຶ້ນ ຫຼື ຫຼຸດລົງ ຕາມການໃຊ້ງານຕົວຈິງໃນແຕ່ລະໄລຍະ ເຊິ່ງຊຳລະພາຍຫຼັງທີ່ສຳເລັດການກວດວຽກໃນແຕ່ລະຄັ້ງ;
- ທຄຕລ ຂໍສະຫງວນສິດໃນການປະຕິເສດຜູ້ສະໜອງໃດທີ່ປະກອບເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດໃນໜັງສືແຈ້ງເຊີນນີ້;
- ກໍລະນີແອມີການເປ່ເພທີ່ຕ້ອງໄດ້ສ້ອມແປງ ຜູ້ທີ່ຊະນະການປະມູນ ຫຼື ຜູ້ໃຫ້ບໍລິການ ຕ້ອງຄິດໄລ່ສະເພາະຄ່າອາໄຫຼ່ທີ່ຕ້ອງປ່ຽນ ໂດຍບໍ່ໃຫ້ຄິດໄລ່ຄ່າແຮງງານໃນການສ້ອມແປງເພີ່ມ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານ ທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້ດ້ວຍ.

ຮກ **ຜູ້ອຳນວຍການ**

ແຂວງ ສປປ ລາວ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ນະຄອນ ຫລວງ ວຽງຈັນ

ມັນທະລາດ ແກ້ວປະເສີດ

**ຜູ້ປະສານງານ**

ທ່ານ ພູວອນ ສີອິນໄຊ

020 59559889